**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ.3105...../ຍທຂ.

ບໍລິຄໍາໄຊ, ວັນທີ.6 ກໍລະກົດ 2026

**ຊື່ໂຄງການ: ຕິດຕັ້ງລະບົບໄຟຟ້າເບື້ອງທາງໂຊລາເຊວ, ແຕ່ທາງເຂົ້າຂົວມິດຕະພາບລາວ-ໄທ ແຫ່ງທີ່ 5 ປາກຊັນ-ບຶງການ ຫາ ເທດສະບານເມືອງປາກຊັນ.**

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ,** ມີຈຸດປະສົງປະມູນຈັດຊື້-ຈັດຈ້າງ ໂຄງການ: ຕິດຕັ້ງລະບົບໄຟຟ້າເບື້ອງທາງໂຊລາເຊວ, ແຕ່ທາງເຂົ້າຂົວມິດຕະພາບລາວ-ໄທແຫ່ງທີ່ 5 ປາກຊັນ-ບຶງການ ຫາ ເທດສະບານເມືອງປາກຊັນ.

1. ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ, ສໍາລັບບ້ອງເງິນທີ່ຈະຊໍາລະສະສາງ ແມ່ນນໍາໃຊ້ງົບປະມານກອງທຶນທາງ ແລະ ບ້ອງອື່ນໆຂອງແຂວງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດໍາເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການຈັດຕັ້ງປະຕິບັດແມ່ນ 6 ເດືອນ;
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດຫມາຍທີ່ກ່ຽວພັນກັບວຽກທີ່ຈະດໍາເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄໍາໄຊ ຫຼື ທົ່ວປະເທດ.
5. ບໍລິສັດທີ່ມີຄວາມເຫມາະສົມ, ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄໍາໄຊ, ໂທລະສັບ/ແຟັກ: 054-212091 ແລະ ຂະແໜງການຈັດຊື້-ຈັດຈ້າງພະແນກການເງິນແຂວງ ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ 8:00-12:00 ແລະ 13:00-16:00; ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ, ເລີ່ມແຕ່ວັນທີ 06 ກໍລະກົດ 2026 ເປັນຕົ້ນໄປ, ໃນລາຄາ 1.000.000 ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງ ໃນເວລາ ຫລື ກ່ອນເວລາ 9:00 ໂມງເຊົ້າ, ຂອງວັນທີ 13 ສິງຫາ 2026 ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;

ສະແກນດ້ວຍ CamScanner

7. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ທາງເລກທີ 21, ບ້ານຫົງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໃນເວລາ 9:00 ໂມງເຊົ້າ, ຂອງວັນ 13 ສິງຫາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ;
8. ເອກະສານປະມູນ ຕ້ອງໄດ້ປະກອບຫນັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ 2 % ຂອງມູນຄ່າປະມູນ ໂດຍຫນັງສືຄ້ຳປະກັນການປະມູນ ຫຼື ຈະຢັ້ງຢືນດ້ວຍກຽດສັກສີຂອງບໍລິສັດກໍ່ໄດ້, ທີ່ຖືກຕ້ອງກັບແບບຟອມ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ.

**ເຊັນແທນຫົວໜ້າພະແນກ**

**ຮອງຫົວໜ້າພະແນກ**

ປອ ສົມນຶກ ແກ້ວມະນີ

ຕິດຕໍ່:

1. ທ່ານ ກ້ອນນອນດຳ ຈັນທະມີນາວົງ ໂທ: 020 22117888
2. ທ່ານ ຄຳປະເສີດ ພັນທະວົງ ຈະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ໂທ: 020 28870055

ສະແກນດ້ວຍ CamScanner